ຈົດໝາຍຂອງໂປໂລ ທີ່ມີໄປເຖິງ

The Letter of Paul to

# ຟີເລໂມນ

# PHILEMON

Salutation

1 ໂປໂລ ຜູ້ຖືກຈຳຈອງຢູ່ເພາະພຣະເຢຊູຄຣິດ ແລະຕີໂມທຽວນ້ອງຂອງເຮົາ
ເຖິງ ຟີເລໂມນ ເພື່ອນຮ່ວມງານທີ່ຮັກຂອງເຮົາ ກັບຄຣິສຕະຈັກທີ່ຢູ່ໃນເຮືອນຂອງເຈົ້າ
2 ແລະອັບເຟັຽນ້ອງສາວ ແລະກັບອາຂີໂປ ຜູ້ເປັນເພື່ອນທະຫານດ້ວຍກັນກັບເຮົາ
3 ຂໍພຣະຄຸນ ແລະສັນຕິສຸກ ຈາກພຣະບິດາເຈົ້າຂອງເຮົາທັງຫລາຍ ແລະຈາກພຣະເຢຊູຄຣິດເຈົ້າ ຈົ່ງມີຢູ່ກັບເຈົ້າ
ທັງຫລາຍເທີ້ນ

## ຄວາມຮັກ ແລະຄວາມເຊື່ອຂອງຟີເລໂມນ

Philemon’s Love and Faith

4 ຟີເລໂມນເອີຍ ເຮົາຂອບພຣະຄຸນພຣະຜູ້ເປັນເຈົ້າຂອງເຮົາຢູ່ສເມີ ໄດ້ລະນຶກເຖິງເຈົ້າເມື່ອເຮົາອ້ອນວອນ
5 ເພາະເຮົາໄດ້ຮັບຂ່າວເຣື່ອງຄວາມຮັກ ແລະຄວາມເຊື່ອຂອງເຈົ້າ ທີ່ເຈົ້າມີຕໍ່ພຣະເຢຊູເຈົ້າ ແລະຕໍ່ບັນດາໄພ່ພົນ
ທັງປວງຂອງພຣະເຈົ້າ
6 ເຮົາໄດ້ອ້ອນວອນຂໍໃຫ້ການເຂົ້າສ່ວນໃນຄວາມເຊື່ອຂອງເຈົ້ານັ້ນ ຈົ່ງໄດ້ເກີດຜົນ ຄືເພີ້ມພູນຄວາມສັງເກດຮູ້
ໃນການດີທຸກຢ່າງທີ່ພວກເຮົາມີໃນພຣະຄຣິດ
7 ນ້ອງເອີຍ, ເຮົາມີຄວາມຍິນດີຫລາຍ ແລະໄດ້ຮັບຊູໃຈເພາະຄວາມຮັກຂອງເຈົ້າ ຈິດໃຈຂອງໄພ່ພົນຂອງພຣະ
ເຈົ້າໄດ້ຊຸ່ມເຢັນຂຶ້ນເພາະເຈົ້າ

## ໂປໂລຂໍຮ້ອງເຣື່ອງໂອເນຊີໂມ

Paul’s Plea for Onesimus

8 ເຫດສັນນັ້ນ ເຖິງແມ່ນວ່າຍ້ອນເຮົາເປັນພີ່ນ້ອງກັນໃນພຣະຄຣິດ ເຮົາມີໃຈກ້າພໍທີ່ຈະສັ່ງເຈົ້າໃຫ້ເຮັດສິ່ງທີ່ຄວນ
ເຮັດ
9 ແຕ່ເພາະເຫັນແກ່ຄວາມຮັກ ເຮົາຈຶ່ງຂໍຮ້ອງເຈົ້າກໍດີກວ່າ ເຮົາ ຄືໂປໂລ ຜູ້ເປັນຣາຊທູດຂອງພຣະເຢຊູຄຣິດ
ແລະບັດນີ້ໄດ້ຖືກຈຳຈອງຢູ່ເພາະເຫັນແກ່ພຣະອົງດ້ວຍ
10 ເຮົາຂໍຮ້ອງເຈົ້າດ້ວຍເຣື່ອງໂອເນຊີໂມ ລູກຂອງເຮົາ ທີ່ເຮົາໄດ້ເກີດເປັນພໍ່ຂອງເຂົາຝ່າຍຄວາມເຊື່ອ ເມື່ອເຮົາຖືກ
ຈຳຈອງຢູ່
11 ເມື່ອກ່ອນ ເຂົາບໍ່ເປັນປໂຍດແກ່ເຈົ້າ ແຕ່ບັດນີ້ກໍເປັນປໂຍດແກ່ເຈົ້າ ແລະແກ່ເຮົາເໝືອນກັນ
12 ບັດນີ້ເຮົາໄດ້ໃຊ້ເຂົາຄືນມາຫາເຈົ້າ ໂອເນຊີໂມຜູ້ນີ້ທີ່ກັບໝາກຫົວໃຈຂອງເຮົາ
13 ເຮົາຢາກໃຫ້ເຂົາຢູ່ກັບເຮົາ ເພື່ອເຂົາຈະໄດ້ບົວລະບັດເຮົາແທນເຈົ້າ ໃນລະຫວ່າງເຮົາຖືກຈຳຈອງຢູ່ເພາະຂ່າວ
ປະເສີດນັ້ນ
14 ແຕ່ວ່າເຮົາບໍ່ຢາກເຮັດສິ່ງໃດກ່ອນໄດ້ຮັບຄວາມເຫັນຈາກເຈົ້າ ເພື່ອຄຸນຄວາມດີທີ່ເຈົ້າເຮັດນັ້ນຈະບໍ່ເປັນການ
ຂົ່ມໃຈ ແຕ່ໃຫ້ເປັນຕາມຄວາມປະສົງຂອງເຈົ້າດ້ວຍ

15 ເພາະວ່າບາງທີ່ອາດຈະເປັນເພາະເຫດນີ້ ທີ່ໃຫ້ເຂົາໄດ້ພາກຈາກໄປຈັກຄາວນຶ່ງ ເພື່ອເຈົ້າຈະໄດ້ຮັບເຂົາກັບຄືນ
ມາຢູ່ອີກຕໍ່ໄປ
16 ບໍ່ແມ່ນເຂົາຈະເປັນຂ້ອຍຂ້າຕໍ່ໄປ ແຕ່ດີກວ່າຂ້ອຍຂ້າອີກ ຄືເປັນອ້າຍນ້ອງທີ່ຮັກ ເຂົາເປັນທີ່ຮັກຂອງເຮົາ ແຕ່ຄົງ
ຈະເປັນທີ່ຮັກຂອງເຈົ້າຫລາຍກວ່ານັ້ນອີກ ທັງໃນຖານະເປັນເພື່ອນມະນຸດ ແລະເປັນເພື່ອນຄຣິສະຕຽນດ້ວຍ
ກັນ
17 ເຫດສັນນັ້ນຖ້າເຈົ້າຖືວ່າເຮົາເປັນເພື່ອນຮ່ວມງານຂອງເຈົ້າ ກໍຈົ່ງຮັບເຂົາໄວ້ເໝືອນຮັບຕົວເຮົາເອງ
18 ແລະຖ້າເຂົາໄດ້ເຮັດຜິດພາດຕໍ່ເຈົ້າປະການໃດ ຫລືໄດ້ເປັນໜີ້ເຈົ້າກໍໃຫ້ເຈົ້າຄິດເອົານຳເຮົາ
19 ຝ່າຍເຮົາໄດ້ລົງມືຂຽນໄວ້ວ່າ, “ເຮົາ ໂປໂລ ຈະໃຊ້ແທນໃຫ້” ແຕ່ສ່ວນເຈົ້າເປັນໜີ້ເຮົານັ້ນ ຄືຊີວິດຂອງເຈົ້າເອງ
ເຮົາຈະບໍ່ອ້າງເຖິງ
20 ດັ່ງນີ້ແຫລະ, ນ້ອງເອີຍ ຂໍໃຫ້ເຮົາໄດ້ຮັບປໂຍດຈາກເຈົ້າເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ໃຫ້ໃຈຂອງເຮົາຊຸ່ມ
ເຢັນຂຶ້ນໃນຖານະເປັນຄຣິສະຕຽນຮ່ວມກັນ
21 ເຮົາມີຄວາມໝັ້ນໃຈວ່າເຈົ້າຈະເຊື່ອຟັງເຮົາ ຈຶ່ງໄດ້ຂຽນຈົດໝາຍມາເຖິງເຈົ້າ ເພາະຮູ້ວ່າເຈົ້າຈະເຮັດລື່ນກວ່າ
ທີ່ເຮົາເວົ້ານັ້ນອີກ
22 ແຕ່ຢ່າງໃດກໍດີ ເຈົ້າຈົ່ງຈັດແຈ່ງທີ່ພັກໄວ້ຖ້າເຮົາ ເພາະເຮົາຫວັງໃຈວ່າພຣະເຈົ້າຈະຊົງໂຜດໃຫ້ເຮົາມາຫາເຈົ້າ
ອີກ ຕາມຄວາມອ້ອນວອນຂອງພວກເຈົ້າ

## ຄຳສະແດງຄວາມຄິດເຖິງໃນຕອນທ້າຍ

Final Greeting and Benediction

23 ເອປາຟາ ຜູ້ຖືກຈຳຈອງດ້ວຍກັນກັບເຮົາ ເພາະເຫັນແກ່ພຣະເຢຊູຄຣິດ ກໍຝາກຄວາມຄິດເຖິງມາຍັງເຈົ້າ
24 ມາຣະໂກ ອາຣິດຕາໂຂ ເດມາ ແລະລູກາ ເພື່ອນຮ່ວມງານຂອງເຮົາ ກໍຝາກຄວາມຄິດເຖິງມາຍັງເຈົ້າດ້ວຍ
25 ຂໍພຣະຄຸນຂອງພຣະເຢຊູຄຣິດເຈົ້າ ຈົ່ງສະຖິດຢູ່ກັບຈິດວິນຍານຂອງເຈົ້າທັງຫລາຍເທີ້ນ